## ທາຕຸສາດ || Etymologie / Etymology

“ວິທີ” ມີ ເຄົ້າ ຈາກ ພາສາ ບາລີ ວິທີ[Vidhi] m. ຊຶ່ງ ເປັນ ນາມ ເພດຊາຍ ຫລື ນາມ ປຸງລິງ ທີ່ ມີ ສຽງສັ້ນ ຫມົດ ທັງສອງ ພຍາງ ຊຶ່ງ “ວິທີ” ຖືກ ແຜງ ເປັນ ຄຳລາວ “ວິທີ” ນີ້ງ ແລະ ກໍ ຖືກ ແຜງ ເປັນ ຄຳລາວ “ພິທີ” ອີກ ນື່ງ ໂດຍ ແຜງ ຕົວວໍ ເປັນ ຕົວພໍ ກໍດັ່ງ

- ປເວຍີ[paveṇī] {m.} => ອ່ານ ວ່າ ປະເວນີ => ແຜງ ເປັນ ປະເພນີ
- ວຌຌາ[vaṇṇanā] {f.} => ອ່ານ ວ່າ ວັນນະນາ => ພັນນະນາ ( {fr.} commentaire )
- ວຑຒນ[vaḍḍhana] {nt.} => ອ່ານ ວ່າ ວັດທະນະ => ວັທນາ => ພັທນາ ( ດ ທັມ ອ່ານ ສຽງທໍ )
- ວາຍຸ[vāyu] {f.} => ອ່ານ ວ່າ ວາຍຸ => ພາຍຸ ( ລົມ ) / ວາຍຸ ວາໂຍ
- ວຣ[vara] {a.} => ອ່ານ ວ່າ ວະຣະ => ວຣ ( ວອນ ) => ພຣະ ແລະ ພອນ
- ວສສ[vassa] {m. nt.} => ອ່ານ ວ່າ ວັດສະ => ພັນສາ ( ເຂົ້າພັນສາ ອອກພັນສາ )
- ວໍສ[vaŋsa] {m.} => ອ່ານ ວ່າ ວັງສະ => ວົງສ => ວົງສາ ວົງ ແລະ ພົງ
    - ສົມເດັດ ພຣະເຈົ້າ ສຸຣິຍະວົງສາ ທັມມິກະຣາດ ( ພສ.໒໑໗໖ / ຈສ.໙໙໕ / ຄສ.໑໖໓໓ – ພສ.໒໒໓໓ / ຈສ.໑໐໕໒ / ຄສ.໑໖໙໐ )
    - ສົມເດັດ ພຣະເຈົ້າ ສຣີ ສວ່າງ ວົງ ( ໑໔ ກໍຣະກະດາ ຄສ.໑໗໗໕ - ໒໙ ຕຸລາ ຄສ.໑໙໕໙ )
    - ຍາດວົງພົງພັນ ທີ່ ມີ ເຄົ້າ ມາ ຈາກ ພາສາ ບາລີ ທັງນັ້ນ
        - ວົງ ນ. ທີ່ ມີ ເຄົ້າ ມາ ຈາກ ຄຳລາວ ແທ້ໆ ຫມາຍເຖິງ ວົງມົນ ວົງແຫວນ ວົງດົນຕຣີ ວົງສັງຄົມ ເປັນຕົ້ນ

“ຊຽນ” ເປັນ ຄຳມູນ ຊຶ່ງ ຫມາຍເຖິງ ການກົດ ການຂີດ ການຫມາຍ ເປັນ ລວດລາຍ ເພື່ອ ໃຫ້ ເປັນ ຕົວຫນັງສື ແລະ ໃຫ້ ເປັນ ເນື້ອຄວາມ

## ຄວາມຫມາຍ || Definition / Definition

“ວິທີ” ແປວ່າ ແບບ ແບບແຜນ ໂຊກ

- ວິທີ ຊຽນ ຫນັງສື ( ຄຳບາລີ ວີຖີ[vīthi] ເປັນ ນາມ ເພດຍິງ ຫລື ອິດຖີລິງຄະນາມ ແລະ ຖືກ ແຜງ )
- ວິທີ ປາກ ວິທີ ເວົ້າ ( ເປັນ ຄຳລາວ ວິຖີ ທີ່ ແປວ່າ ຊ່ອງ ທາງ ດັ່ງ ວິຖີ ທາງ ທີ່ ແປວ່າ ແນວທາງ ຊຶ່ງ ແປ )
- ວິທີ ຕົ້ມ ເຂົ້າປຽກ ( ເປັນ ພາສາ ອັງກິດ ວ່າ {f.} a street ; a track )
- ວິທີ ປ້ອງກັນ ຄົນລາວ
- ວິທີ ຕົ້ມ ເຈັກ
- ວິທີ ຕົ້ມ ແກວ
- ວິທີ ຕົ້ມເຈັກຕົ້ມແກວ
- ໆລໆ

ວິທີ + ກິຣິຍາ + ນາມ

“ຊຽນ” ແປວ່າ ແຕ່ງ ຫນັງສື ດັ່ງ ຊຽນ ຈົດຫມາຍ ແລະ ແຕ່ງ ເຣື່ອງ ເປັນຕົ້ນ ຫລື ຂີດ ລວດລາຍ ໃຫ້ ເປັນ ຕົວຫນັງສື

## ສະນາມ || Synonymie / Synonymy

ຄວາມຫມາຍ ຂ້າງຄຽງ ມີ ສອງ ຄຳ ຄື "ພິທີ" ແລະ "ມັງຄະລະ" || ຝຣັ່ງ. Cérémonie

## ຄຳອະທິບາຍ || Explication / Explanation

ຄວາມຫຍຸ້ງຍາກ ໃນ ການຂຽນ ຄຳ ຕ່າງໆ ໃນ ພາສາ ລາວ ມາ ຈາກ ຄຳ ທີ່ ຂຽນ ດ້ວຍ ພຍັນຊນະ ຈຽງ ນຶ່ງ ຄຳ ທີ່ ຂຽນ ດ້ວຍ ຕົວສະກົດ ພິເສດ ນຶ່ງ ແລະ ຄຳເອກ ນຶ່ງ

## ໑- ຄຳເອກ ຫລື ຄຳ ທີ່ ມີ ສຽງດຽວ ກັນ

ຫມາຍເຖິງ ຄຳ ທີ່ ປະກອບ ດ້ວຍ ວັນນະຍຸດ ເອກ ທຸກໆ ຄຳ ຍົກເວັ້ນ ຄຳ ທີ່ ສະກົດ ດ້ວຍ ຕົວສະກົດ ກ ດ ບ ຊຶ່ງ ເພິ່ນ ປຽບ ເປັນ ຄຳເອກ ໃນ ການຂຽນ ກອນ ຍ້ອນວ່າ ຄຳ ປະເພດ ດັ່ງກ່າວ ເປັນ ຄຳຕາຍ ຄື ຄຳ ທີ່ ຜັນສຽງ ບໍ່ ໄດ້ ຫລື ຄຳ ທີ່ ປະກອບ ວັນນະຍຸດ ບໍ່ ໄດ້ ທຸກ ຮູບ ນັ້ນເອງ ດັ່ງ ດາກ ດາດ ດາບ ກາກ ກາດ ກາບ ເປັນຕົ້ນ ( ກ້າກ ກ້າດ ກ້າບ ແຕ່ ໃສ່ ວັນນະຍຸດ ອື່ນ ບໍ່ ໄດ້ )

ຄຳເອກ ໃນ ການແຕ່ງ ກາບກອນ ຫມາຍເຖິງ ຄຳໃດ ທີ່ ຕ້ອງ ປະກອບ ກັບ ວັນນະຍຸດ ເອກ ຊຶ່ງ ຄຳນັ້ນ ບໍ່ ຈຳເປັນ ຈະ ປະກອບ ວັນນະຍຸດ ເອກ ກໍ ໄດ້ ຄັນ ມັນ ສະກົດ ດ້ວຍ ຕົວ ກ ດ ບ ( ຄັນ ໃສ່ ໄມ້ເອກ ມັນ ກໍ ອ່ານ ບໍ່ ອອກ )

| | | | | |
|---|---|---|---|---|
| ◌ຂ◌ | ກັບ | ◌ຄ◌ | ດັ່ງ | ຂ່າ ກັບ ຄ່າ |
| ◌ງ◌ | ກັບ | ◌ຫງ◌ | ດັ່ງ | ງ່າ ກັບ ຫງ່າ |
| ◌ສ◌ | ກັບ | ◌ຊ◌ | ດັ່ງ | ສໍ່ ກັບ ຊໍ່ |
| ◌ຍ◌ | ກັບ | ◌ຫຍ◌ | ດັ່ງ | ຍ່ອງ ກັບ ຫຍ່ອງ |
| ◌ຖ◌ | ກັບ | ◌ທ◌ | ດັ່ງ | ຖ່າຍ ກັບ ທ່າຍ |
| | | | | ຖ່ານ ກັບ ທ່ານ |
| ◌ນ◌ | ກັບ | ◌ຫນ◌ | ດັ່ງ | ນຶ່ງ ກັບ ຫນຶ່ງ |
| | | | | ນ່າຍ ກັບ ຫນ່າຍ |
| ◌ຜ◌ | ກັບ | ◌ພ◌ | ດັ່ງ | ແຜ່ ກັບ ແພ່ |
| ◌ຝ◌ | ກັບ | ◌ຟ◌ | ດັ່ງ | ຝໍ່ ກັບ ຟໍ່ |
| ◌ມ◌ | ກັບ | ◌ຫມ◌ | ດັ່ງ | ມ່າ ກັບ ຫມ່າ |
| ◌ລ◌ | ກັບ | ◌ຫລ◌ | ດັ່ງ | ລ່ວງ ກັບ ຫລ່ວງ |
| ◌ວ◌ | ກັບ | ◌ຫວ◌ | ດັ່ງ | ວ່າງ ກັບ ຫວ່າງ |
| ◌ຫ◌ | ກັບ | ◌ຮ◌ | ດັ່ງ | ຫ່າ ກັບ ຮ່າ |

ແຜງ ໑ - ຄຳເອກ ມີ ສຽງດຽວ ກັນ ທັງນັ້ນ ແລະ ຍັງ ເປັນ ຄຳ ທີ່ ມີ ສຽງກາງ ອີກດ້ວຍ

ຄຳ ຕ່າງໆ ພາຍໃນ ຈຳພວກ ນີ້ ( ແຜງ ໑ ) ຊຶ່ງ ລາງຕົວ ກໍ ບໍ່ ມີ ຄວາມຫມາຍ ອີກປະການນຶ່ງ ຂ້າພະເຈົ້າ ໄດ້ເລີ້ມ ຂຽນ

ຄຳ ເຫລົ່ານີ້ ເປັນ ວັຈນານຸກົມ ແລ້ວ ແຕ່ ມັນ ໄປ ບໍ່ ສຸດ ເພາະ ເຮັດ ຫລາຍຢ່າງ ພ້ອມກັນ ໂພດເກີນໄປ ໂດຍ ຈຸດປະສົງ ຢາກ ອຳນວຍ ຄວາມສະດວກ ໃຫ້ ແກ່ ຜູ້ ໃຊ້ສອຍ ພາສາ ລາວ ທຸກຖ້ວນຫນ້າ ນັ້ນເອງ

ກັນ ເຮົາ ຈະ ລໍຖ້າ ວັຈນານຸກົມ ທີ່ ຂ້າພະເຈົ້າ ດຳເນີນ ຢູ່ ນັ້ນ ມັນ ອາດ ຈະ ບໍ່ ເກີດ ສຳເຣັດ ຮູບ ຂຶ້ນ ມາ ກໍເປັນໄດ້ ສະນັ້ນ ຂ້າພະເຈົ້າ ຈຶ່ງ ໄດ້ຕັດສິນໃຈ ເຮັດ ເປັນ ແບບຢ່າງ ອັນນຶ່ງ ເພື່ອ ໃຫ້ ທ່ານ ສາມາດ ໃຊ້ ຕາມ ແບບຢ່າງ ດັ່ງກ່າວ ນັ້ນ ໄດ້ ແຕ່ ຕ້ອງ ໃຊ້ ຄວາມພິກໄຫວ ເລັກນ້ອຍ ຄື ຄຳເວົ້າ ໃນ ພາສາ ລາວ ຈະ ໃຊ້ ເປັນ ຄູ່ ກັນ ໄປ ເປັນ ສ່ວນນມາກ

- ເຜີຍແຜ່
    - ແພ່ => ແພ່ ແປ ວ່າ ຂຍາຍ ເຜີຍ ເປີດ ເປີດກວ້າງ ເປີດເຜີຍ ( ouvert / open ) ຫລື ເຮັດ ໃຫ້ ຄົນ ທັງຫລາຍ ຮູ້ຈັກ ສິ່ງໃດສິ່ງນຶ່ງ ມາກ ຂຶ້ນກວ່າ ເກົ່າ ດັ່ງ "ຝັງ ສາຍແຮ່ ແພ່ ສາຍບື" { ຜຶ້ງ ອອກ(?) ດັ່ງ ຜຶ້ງ ຜ້າ } ຫລື "ອອກ ແມ່ ແພ່ ລູກ" ເປັນຕົ້ນ
    - ແຜ່ => ( ຂໍ ) ແຜ່ ເງິນ ແຜ່ ຄຳ ຫລື ແຜ່ ປັດໄຈ ເປັນຕົ້ນ
        - ຊຶ່ງ ຕົວຢ່າງ ຂອງ ຄຳເວົ້າ ດັ່ງກ່າວ ນີ້ ບໍ່ ເປັນ ຕົວຢ່າງ ອັນ ເຫມາະສົມ ພໍ ປານໃດ ( ມີ ພຽງແຕ່ ຢາກ ໃຫ້ ຄົນ ທັງຫລາຍ ຂຽນ ຄຳນີ້ ຖືກ ຢ່າງດຽວ ເພາະວ່າ ຂ້າພະເຈົ້າ ເອງ ກໍ ເຄີຍ ຂຽນ ຜິດ ມາ ແລ້ວ ຈຶ່ງ ບໍ່ ຢາກ ໃຫ້ ຄົນ ອື່ນ ຂຽນ ຜິດ ໄປ ຕາມໆ ກັນ ຕື່ມ ອີກ )
- ສໍ່ => ສັບສໍ່ => ກັນ ເຮົາ ຄິດ ຫາ ຄຳຄູ່ ຂອງ ມັນ ໄດ້ ເຮົາ ກໍ ສາມາດ ຮູ້ຈັກ ບໍ່ ຄຳໃດ ກໍ ຄຳນຶ່ງ ພາຍໃນ ສອງ ຄຳ ນີ້ ດັ່ງນັ້ນ ຄຳ "ຊໍ່" ທີ່ ຂຽນ ດ້ວຍ ຕົວຊໍ ( ◌ຊ◌ ) ຈະ ເປັນ ຄຳ ທີ່ ເພິ່ນ ໃຊ້ ສຳລັບ ຊໍ່ຟ້າ
- ລ່ວງ => ລ່ວງລັບ ( ຜ່ານ ໄປ ແລ້ວ / ກາຍ ໄປ ແລ້ວ / ເກີນ ໄປ ແລ້ວ ) => ສະນັ້ນ ບັກລ່ວງ ຈຶ່ງ ໃຊ້ ລ່ວງ ອັນດຽວ ກັນ ນີ້ ແລ ຊຶ່ງ ຫມາຍຄວາມວ່າ ຄຳ "ຫລ່ວງ" ບໍ່ ມີ ໃນ ພາສາ ລາວ
- ທ່າ => ທ່າຫຼູ ( ຊຶ່ງ ຫມາຍເຖິງ ພຍາດ ) ດັ່ງ ຕາຍທ່າ ຕາຍຫຼູ
    - ຄົນ ສ່ວນຫລາຍ ຈະ ຂຽນ ຄຳ ທີ່ ຫມາຍເຖິງ ພຍາດ ເປັນ "ຮ່າ" ຊຶ່ງ ຫມາຍຄວາມວ່າ ຜິດ ແທ້ ແລ
- ຮ່າ => ກັນ "ທ່າ" ໂຕນີ້ ໃຊ້ ເປັນ ທ່າຫຼູ ແລະ "ຮ່າ" ໂຕນີ້ ກໍ ຈຳເປັນ ຕ້ອງ ໃຊ້ ເປັນ ຮ່າຝົນ ແລ

ອັນນີ້ ຄື ການໃຊ້ ຫົວ ພຽງ ເລັກນ້ອຍ ຄອບ[1] ຄຳລາວ ຈະ ເວົ້າ ເປັນ ຄູ່ ກັນ ໄປ ເປັນ ສ່ວນ ສຳຄັນ ອີກປະການນຶ່ງ ຄຳເອກ ມີ ສຽງກາງ ສເມີ ຊຶ່ງ ກ່ອນ ຫນ້ານີ້ ຄຳ ສາມັນ ( ຄຳ ໄຮ້ ວັນນະຍຸດ ) ມີ ຄີ້ນສຽງ ຕ່າງ ກັນ ແຕ່ ເມື່ອ ປະກອບ ວັນນະຍຸດ ເອກ ແລ້ວ ຄຳ ເຫລົ່ານີ້ ຈຶ່ງ ມີ ຄີ້ນສຽງ ອັນດຽວ ກັນ ທັງນັ້ນ ເຖິງແມ່ນວ່າ ສຽງ ສາມັນ ເຄີຍ ມີ ສຽງສູງ ຫລື ສຽງຕ່ຳ ມາ ກ່ອນ ແລ້ວ ກໍຕາມ

## ບົດຊ່ອຍ ຄວາມຊົງຈຳ

ຜິວ່າ ຄຳໃດ ທີ່ ເຮົາ ສົງໄສ ແລະ ທີ່ ມີ ສຽງ ດຽວກັນ ກັບ ຄຳອື່ນ ໃຫ້ ທ່ານ ເອົາ ຄຳນັ້ນ ປຽບ ໃສ່ ສຳນວນ ຄຳເວົ້າ ພາສາ ລາວ ດັ່ງນີ້

- ຂ່າ ຫລື ຄ່າ => ໃຫ້ ຫຽບ ໃສ່ ຄຳ ຂ່າຂີ ຫລື ຂີຂ່າ ຄຸນຄ່າ ( ຄ່າ = ຣາຄາ ຊຶ່ງ ຄ່າ ເປັນ ຄຳລາວ ແທ້ )
- ຂູ່ ຫລື ຄູ່ => ໃຫ້ ຫຽບ ໃສ່ ຄຳ ຂົ່ມຂູ່ ຂູ່ເຂັນ / ຄູ່ຄຽງ ຄູ່ຄອງ ຄູ່ຄຸມ
- ໄຂວ່ ຫລື ໄກວ່ => ( ຄົງ ຈະ ແມ່ນ ຄວາມເປັນຈິງ ແນວດຽວກັນ )
    - ໄຂວ່ => ຝົນ ຕົກ ບໍ່ ໄຂວ່ ເມືອງ ( ບໍ່ ທົ່ວ ເມືອງ ) ຫລື ຢາຍ ນ້ຳ ບໍ່ ໄຂວ່ ກັນ
    - ໄກວ່ => ໄກວ່ເລກຄູນ ( ໄກວ່ຕີນກາ ໄກວ່ຈຽງ ) / ໄກວ່ຂັດຂວາງ / ໄກວ່ຂາ

1 ຄອບ + ນາມ : ບ້ອນ ( ໄດ້ບ້ອນ ໄປ ໃນ ທາງ ດີ {fr.} grâce à ) ດັ່ງ "ຜົວ ເປັນ ເພັງ ຄອບ ເມັຽ ພາ ຮູ້ ( ຮູ້ຈັກ )"

- ງ່າ ຫລື ຫງ່າ => ງ່າໄມ້ ( ສງ່າ = ງາມ / ສງ່າຜ່າເຜີຍ ) / ( ຫງ່າ ບໍ່ ໃນ ຄວາມລາວ )
- ສ່າ ຫລື ຊ່າ => ສ່າສານ ສ່າເຫລົ້າ ສ່າຂີ້ ສ່າຂີ້ເຫລົ້າ ( "ສາມສ່າ" ມາ ຈາກ ຈັງຫວະ Cha-cha-cha ຊຶ່ງ ເປັນ ຄວາມຢືມ ທີ່ ເຮົາ ຕ້ອງ ຂຽນ ແບບນີ້ ) / ຊ່າລື
- ສໍ່ ຫລື ຊໍ່ => ໃຫ້ ທຽບ ໃສ່ ຄຳ ສັບສໍ່ / ຊໍ່ຊ້ອງ ( ຊໍ່ຟ້າ ຫລື ຊໍ່ ດອກໄມ້ )
- ສັ່ງ ຫລື ຊັ່ງ => ໃຫ້ ທຽບ ໃສ່ ຄຳ ສັ່ງສອນ / ຊັ່ງຊາ
- ສ່ອງ ຫລື ຊ່ອງ => ໃຫ້ ທຽບ ໃສ່ ຄຳ ສ່ອງແສງ ( ສອດສ່ອງ ແຕ່ ບໍ່ ແມ່ນ ສ່ອງຊອດ ) / ຊ່ອງຊີ້ ( ຊ່ອງທາງ )
- ສິ້ນ ຫລື ຊິ້ນ => ສິ້ນພຸ່ງ[ສິ້ນ-ພຸ່ງ] ສິ້ນສຸດ[ຊິ້ນ-ສຸດ] ( ຂຽນ ແນວນຶ່ງ ອ່ານ ແນວນຶ່ງ ) / ຊິ້ນສ່ວນ ຊິ້ນເຄີຍ
- ເສື່ອມ ຫລື ເຊື່ອມ=> ເສື່ອມເສັງ ( ຄວາມສີວິໄລ ເສື່ອມ ເສື່ອມໂຊມ ເສື່ອມຊຶມ ເສື່ອມເຂົ້າກັນ ) / ( ບໍ່ ມີ ເຊື່ອມ )
- ຖ່າ ຫລື ທ່າ => ທ່າທີ ທ່ານ້ຳ ໆລໆ ( ບໍ່ ມີ ຖ່າ ໃນ ຄວາມລາວ )
- ຖ່ອງ ຫລື ທ່ອງ => ຖ່ອງຖ້ຽງ ( ເກັ່ງນຶ່ງ / ເຄິ່ງນຶ່ງ ) / ທ່ອງທ່ຽວ ( ທ່ອງຂຶ້ນໃຈ ທ່ອງບົດຮຽນ )
- ໂຖ່ ຫລື ໂທ່ => ໂຖ່ຖັ່ງ / ໂຖ່ນ້ຳ ໂຖ່ປ່າເຂົ້າ = ບຸກໄປ / ເຈົ້າໂຖ່ ໃນ ວົງໂປ ວົງໄພ້ "ໃຜ ເປັນ ເຈົ້າໂຖ່ ?"
- ຖ່ານ ຫລື ທ່ານ => ຖ່ານຫີນ ຖ່ານໄຟ / ທ່ານທ້າວ ພນະທ່ານ ( ທ່ານ ສັພນາມ / ທ່ານ = ເຈົ້າ )
- ນຶ່ງ ຫລື ຫນຶ່ງ => ນຶ່ງ ສອງ ສາມ ( ໄວຍາກອນ ລາວ ບໍ່ ຂຽນ ຫນຶ່ງ )
- ນ່າຍ ຫລື ຫນ່າຍ=> ຫນ່າຍແຫນງ ( ອາຄາດ ບາດຫມາງ ) ຈຳຫນ່າຍ ( ບໍ່ ມີ ນ່າຍ ໃນ ຄວາມລາວ )
- ແຜ່ ຫລື ແພ່ => ແຜ່ເງິນ / ແພ່ພີ ແພ່ພາຍ ເຜີຍແພ່ ( ຝັງສາຍແຮ່ ແພ່ສາຍບື / ອອກ ແມ່ ແພ່ ລູກ )
- ຜ່າຍ ຫລື ພ່າຍ => ພ່າຍແພ້ ( ຜ່າຍ ບໍ່ ມີ ໃນ ຄວາມລາວ )
- ມ່າ ຫລື ຫມ່າ => ຕົກຂມ່າ ຊຶ່ງ ຂມ ເປັນ ພຍັນຊນະ ຈູງ / "ຫມ່າ ເຂົ້າ"
- ມັ່ນ ຫລື ຫມັ່ນ => ຫມັ່ນຫມອງ ສືຫມັ່ນ ( ບໍ່ ມີ ມັ່ນ ໃນ ພາສາ ລາວ )
- ລໍ່ ຫລື ຫລໍ່ => ຫລໍ່ຫລອມ / ລໍ່ລ້ຽງ => ລໍ່ ນ້ຳ ໄປ ໃສ່ ຕົ້ນໄມ້ / ເອົາ ນ້ຳ ລໍ່ ຮູ ຈິລໍ່ ( ລໍ່ ຮູຕັ໋ງ ເດັກນ້ອຍ )
- ລ່ວງ ຫລື ຫລ່ວງ => ລ່ວງລັບ ( ລ່ວງ = ເກີນ ) / ( ບໍ່ ມີ ຫລ່ວງ ໃນ ຄວາມລາວ )
  - ລັບ ແປວ່າ ຫາຍໄປ ( ລັບແລ ລັບແລນ => ພິຕາວັນພັນລັບ ຍັງສັ່ງລາ "ອາຈານ ພິມມາ ສົມສຸທີ" )
  - ບັກລ່ວງ / ບັກທ່ານີ້ ມຶງ ຢ່າ ໄປ ລ່ວງ ລູກ ລ່ວງ ເມັງ ເຂົາ ແມ ເວີຍ ( ເກີນ ເກີນໄປ )
- ວ່າງ ຫລື ຫວ່າງ => ວ່າງທາງ ສາມ ວ່າງ ( ທ່າງ ) ຂ້ອຍບໍ່ວ່າງ ( ຍັງ ຄາ ມີ ຢູ່ ) / ຣະຫວ່າງ
- ທ່າ ຫລື ຮ່າ => ທ່າຫຼູ / ຮ່າຮຳ ຫລື ຮ່າຝືນ ( ຜີທ່າຜີຫຼູ ຫລື ຕາຍທ່າຕາຍຫຼູ ຮ່າຝືນ )
- ແທ່ ຫລື ແຮ່ => ແທ່ແທນ / ຫີນແຮ່ ບໍ່ແຮ່ ແຮ່ສາຍບື
- ທໍ່ ຫລື ຮໍ່ => ຮັກຮໍ່ ( ຮໍ່ ~ ຮັກ ) / ທໍ່ຫຸ້ມ ( ທໍ່ຫມົກ )
- ທ່ຳ ຫລື ຮ່ຳ => ຮ່ຳຮຽນ ຮ່ຳຮອນ(ເຖິງນ້ອງ) / ຮ່ຳຫົວ ມັນ ໂລດ / ຮ່ຳຫັ່ນ ປະຫັດປະຫານ = ຕີແບບ ບໍ່ໄວ້ຫນ້າ ( ຄົງ ບໍ່ ມີ ທ່ຳ )
- ທ່າງ ຫລື ຮ່າງ => ທ່າງເຫີນ ທ່າງຫີນ ທ່າງທາງ ທ່າງໄກ / ຮ່າງເຮົາ ຮ່າງຮູບ ຮ່າງກາຍ ໂຄງຮ່າງ
- ທ່ອງ ຫລື ຮ່ອງ => ( ທ່ອງ ຄົງ ບໍ່ ມີ ໃນ ຄວາມລາວ ) / ຮ່ອງຮອຍ ( ຮ່ອງ ~ ຄອງ )
- ໄຣ່ ຫລື ໄຮ່ => ໄຣ່ຮົ້ວ ໄຣ່ສວນ / ໄຮ່ນາ ( ກໍຣະນີ ພິເສດ )
- ໆລໆ

ສິ່ງ ເຫລົ່ານີ້ ແລ ທີ່ ເຮົາ ຕ້ອງ ຊອກຫາ ສຳນວນ ຄຳເວົ້າ ໃຫ້ ເຂົ້າກັນ ກັບ ຄຳໃດຄຳນຶ່ງ ທີ່ ມີ ພຍັນຊນະ ຕົວດຽວ ກັນ ພາຍໃນ ຄຳ ທັງສອງ ນັ້ນ ( ຄັນ ທ່ານ ຊອກ ໄດ້ ກະຣຸນາ ບອກ ຂ້າພະເຈົ້າ ດ້ວຍ ຈະ ເປັນ ພຣະຄຸນ ຢ່າງສູງ )

ຕົວຢ່າງ ວ່າ ທ່ານ ຢາກ ຂຽນ ຄຳ ແຮ່ ຫລື ແທ່ ທີ່ ເປັນ ອະໄວຍະວະ ແຕ່ ທ່ານ ບໍ່ ຮູ້ຈັກ ວ່າ ຄຳໃດ ຈະ ເຂົ້າ ກັບ ຄວາມຕ້ອງການ ຂອງ ທ່ານ ສະນັ້ນ ທ່ານ ຕ້ອງ ຊອກຫາ ສຳນວນ ຄຳເວົ້າ ແທ່ແທນ ຊຶ່ງ "ແທ່" ອັນນີ້ ບໍ່ ແມ່ນ ອະໄວຍະວະ ກໍ ຫມາຍຄວາມວ່າ ແມ່ນ "ແຮ່" ຕົວນີ້ ທີ່ ທ່ານ ຕ້ອງການ ຢາກ ຂຽນ

ເມື່ອ ມີ ສຳນວນ ຄຳເວົ້າ ຢູ່ແລ້ວ ແລະ ຖ້າ ຄຳໃດ ບໍ່ ເຂົ້າ ໃນ ກໍຣະນີ ສຳນວນ ຄຳເວົ້າ ຂອງ ລາວ ແບບນີ້ ຫມາຍຄວາມວ່າ ເຮົາ ຊຽນ ຄຳນັ້ນ ບໍ່ ຖືກ

ອັນນີ້ ຄື ບົດຊ່ອຍ ຄວາມຊົງຈຳ ຂັ້ນ ພື້ນຖານ ( Aide-mémoire de base ) ຂອງ ຄຳ ທີ່ ມີ ສຽງ ດຽວກັນ ໃນ ການຂີດຊຽນ ພາສາ ລາວ ແລະ ມັນ ກໍ ຍັງ ບໍ່ ສິ້ນສຸດ ພຽງ ເທົ່ານີ້ ເພາະ ມັນ ຍັງ ສາມາດ ດຳເນີນ ໄປ ໄກກວ່າ ນີ້ ອີກ ແຕ່ວ່າ ໃຫ້ ທ່ານ ຊອກຫາ ຊິ້ນສ່ວນ ກ່ຽວຂ້ອງ ເອົາ ເອງ ( ແປວ່າ ດ້ວຍ ທ່ານເອງ )

## ໖- ກົດເກນ ການຊຽນ ຕາມ ເຄົ້າ ດ້ວຍ ຕົວສະກົດ ພິເສດ

ຫມາຍເຖິງ ຖ້ອຍຄຳ ທີ່ ສະກົດ ດ້ວຍ ຕົວສະກົດ ພິເສດ ຢ່າງດຽວ ຊຶ່ງ ກ່ອນອື່ນ ຫມົດ ເຮົາ ຕ້ອງ ເຂົ້າໃຈ ວ່າ ຕົວສະກົດ ພິເສດ ແມ່ນ ພຍັນຊນະ ທີ່ ເພິ່ນ ໃຊ້ ສະກົດ ກາງຄຳ ສະເພາະ ຄຳໃດ ທີ່ ຖືກ ຢືມ ມາ ຈາກ ພາສາ ບາລີ ຫລື ສັນສະກຣິດ ເປັນ ສ່ວນໃຫຍ່ ເຊັ່ນ

| ຄຳເຄົ້າ | ຕົວສະກົດ ຖືກ ຕັດ | ຕົວຕາມ ຍັງ | ກາຍເປັນ | ດັ່ງ | ຕົວສະກົດ ພິເສດ |
|---|---|---|---|---|---|
| ສຸກຂ[Sukkha] | ກ | ຂ | ສຸຂ | ສຸຂພາບ | ຂ ສະກົດ ກາງຄຳ |
| ທຸກຂ[Dukkha] | ກ | ຂ | ທຸຂ | ທຸຂເວທນາ | ຂ ສະກົດ ກາງຄຳ |
| ກິຈຈ | ຈ | ຈ | ກິຈ | ກິຈການ | ຈ ສະກົດ ກາງຄຳ |
| ຣັຕຖ | ຕ | ຖ | ຣັຖ | ຣັຖບານ | ຖ ສະກົດ ກາງຄຳ |
| ວິຊຊາ | ຊ | ຊ | ວິຊາ | ວິຊາ | ບໍ່ ມີ ຕົວສະກົດ ກາງຄຳ |
| ອະວິຊຊາ | ຊ | ຊ | ອະວິຊາ | ອະວິຊາ | ບໍ່ ມີ ຕົວສະກົດ ກາງຄຳ |
| ບຸພພ | ພ | ພ | ບຸພ | ບຸພບົດ | ພ ສະກົດ ກາງຄຳ |

ແຜງ ໖ - ຕົວຢ່າງ ຄຳເຄົ້າ ບາລີ ທີ່ ຖືກ ຕັດ ຕົວສະກົດ ອອກ
ຊຶ່ງ ຕົວຕາມ ໃນ ຫລັກ ການຊຽນ ພາສາ ບາລີ ບໍ່ ມີ ສິດ ເປັນ ຕົວສະກົດ ໄດ້
( ສະນັ້ນ ການຊຽນ ຕາມເຄົ້າ ຂອງ ທ່ານ ຫມາຍເຖິງ ເຄົ້າ ບາລີ ຫລື ເຄົ້າ ສັນສະກຣິດ ? )




ຮູປຕາ ໑

ຈະ ເປັນ ຄຳ ທີ່ ມີ ພຍາງ ດຽວ ຫລື ຄຳ ທີ່ ມີ ຫລາຍ ພຍາງ ກໍຕາມ ຄັນ ຄຳໃດ ມີ ຕົວສະກົດ ໃຫ້ ຊຽນ ຄຳນັ້ນ ດ້ວຍ ຕົວສະກົດ ພາຍໃນ ແປດ ຕົວ ນີ້

ອີງ ຕາມ ຫລັກ ໄວຍາກອນ ຫລັກ ນີ້ ຄຳລາວ ທີ່ ເຮົາ ສາມາດ "ຊຽນ ຕາມ ເຄົ້າ" ບາລີ ແລະ ເຄົ້າ ສັນສະກຣິດ ໄດ້ ຄື ຄຳ

## ວິທີ ຊຽນ

ທີ່ ຊຽນ ດ້ວຍ ຕົວສະກົດ ພິເສດ ຫລື ຕົວສະກົດ ກາງຄຳ ( ຮູປຕາ ໑ ) ຊຶ່ງ ຄຳ ດັ່ງກ່າວ ຕ້ອງ ເປັນ ຄຳປະສົມ ເກືອບ ທຸກ ຄຳ ດັ່ງ

- ສິລທັມ => ສິລະ + ທັມມະ => ຈະ ຊຽນ ໄດ້ ສອງ ຢ່າງ ດ້ວຍກັນ ຄື ຜິວ່າ ຊຽນ
  - ສິລທັມ => ໃຫ້ ອ່ານ ວ່າ ສິນ-ລະ-ທຳ
  - ສິນທັມ => ໃຫ້ ອ່ານ ວ່າ ສິນ-ທຳ
    - (ສຳລັບ ຜູ້ຂີ້ສົ້) ເປັນຫຍັງ ຈຶ່ງ ຊຽນ "ທັມ" ແລະ ກໍ ບໍ່ ແມ່ນ "ທຳ" ?
      - "ທັມ" ເພາະວ່າ ຕົວມໍ ( ມ ) ເປັນ ຕົວສະກົດ ທ້າຍຄຳ ພາຍໃນ ຕົວສະກົດ ທັງແປດ ແລະ ຈຳເປັນ ຕ້ອງ ຊຽນ ແບບ ນີ້ ( ທັມມະ ທັມໂມ ທັມມັງ ດັ່ງ ທັມມະຈະຣິຍາ ທັມມະສາດ )
      - "ທຳ" ເພາະວ່າ ຄຳນີ້ ບໍ່ ມີ ຕົວສະກົດ ໃດໆ ທັງສິ້ນ ແຕ່ ສຣະອຳ ( ◌ຳ ) ເປັນ ສຣະ ທ້າຍຄຳ ( ທຳ ແປ ວ່າ ເອົາ ຝ່າຕີນ ຖີບ ແຮງໆ / ກະທຳ ແປ ວ່າ "ເຮັດ" ເຫມືອນດັ່ງຄຽວ ກັບ ຄຳ "ຮູ້ຈັກ" ທີ່ ໄທລາວ ເວົ້າ ບໍ່ ສຸດ ຄວາມ ຈຶ່ງ ກາຍເປັນ "ຮູ້" ລ້າໆ ຊຶ່ງ ແປ ຕາມໂຕ ວ່າ ບໍ່ ຂີ້ດີ້ ( ຈັກ ດັ່ງ ເຈົ້າ ຈັກ ເພິ່ນ ບໍ ? ຊຶ່ງ ຫຍໍ້ ຈາກ ຮູ້ຈັກ ) ແລະ "ທຳ" ທີ່ ເຮົາ ໃຊ້ ແທນ ຄຳ "ເຮັດ" ແລະ ທີ່ ເຮົາ ເວົ້າກັນ ທຸກ ວັນ ນີ້ ກໍ ຢູ່ ໃນ ທຳນອງ ດຽວກັນ ແລ ຕາມ ທັມມະດາ "ທຳ" ລ້າໆ ແປ ວ່າ ເອົາ ຝ່າຕີນ ຖີບ ແທ້ ແລ ເຖິງຢ່າງໃດ ກໍດີ ຄຳນີ້ ຂ້າພະເຈົ້າ ກົວ ວ່າ ມັນ ເຂົ້າ ຢູ່ ໃນ ຂນົບ ຂອງ ຄົນລາວ ແລ້ວ )
- ຣັຖບານ => ຣັຕຖະ + ປາລະ => ຣັຖ + ບາລ => ຣັຖບາລ => ຣັຖບານ
  - ຕົວຖໍ ( ຖ ) ເປັນ ຕົວສະກົດ ພິເສດ ( ຕົວສະກົດ ກາງຄຳ )
  - ເມື່ອ "ບາລ" ຢູ່ ທ້າຍຄຳ ເຮົາ ຕ້ອງ ໃຊ້ ຕົວສະກົດ ທັງແປດ ແລ ຄື ຕົວນໍ ( ນ ) ຕົວດຽວ ເທົ່ານັ້ນ ທີ່ ສາມາດ ຊຽນ ເປັນ "ບານ" ໄດ້
    - ເຖິງແມ່ນວ່າ ຄຳ "ບາລ" ມີ ເຄົ້າ ມາ ຈາກ ພາສາ ບາລີ ກໍຈິງ ແຕ່ ໄວຍາກອນ ຫລັກນີ້ ອະນຸຍາດ ໃຫ້ ໃຊ້ ຕົວສະກົດ ທັງແປດ ສຳລັບ ພຍາງ ທ້າຍຄຳ ຫລື ຄຳທ້າຍ ທຸກໆ ຄຳ ຈຶ່ງ ຂໍ ໃຫ້ ເຂົ້າໃຈ ໄປ ໃນ ແງ່ ນີ້
- ໂຣຄະ => ໂຣຄ => ໂຣກ ຄຳນີ້ ມີ ພຍາງ ດຽວ ສະນັ້ນ ຕ້ອງ ຊຽນ ດ້ວຍ ຕົວສະກົດ ທ້າຍຄຳ ຄື ຕົວກໍ ( ກ )
- ສັງຄະ => ສັງຄ => ສັງ => ເນື່ອງຈາກວ່າ
  - ເຮົາ ຈະ ອ່ານ ພຍັນຊນະ ຄ ໂດຍ ລຳພັງ ບໍ່ ໄດ້ ຍ້ອນ ມັນ ເປັນ ພຽງ ພຍັນຊນະ ປຸ່ງວ ຕົວນຶ່ງ ເທົ່ານັ້ນ ແລະ ມັນ ກໍ ບໍ່ ເປັນ ຕົວສະກົດ ອີກ ນຶ່ງ ( ເພິ່ນ ບໍ່ ໃຊ້ ໄມ້ການັນ ໃນ ໄວຍາກອນ ຫລັກ ນີ້ )
  - ພຍາງ ທ້າຍຄຳ ຫລື ຄຳທ້າຍ ທຸກໆ ຄຳ ຕ້ອງ ຊຽນ ດ້ວຍ ຕົວສະກົດ ຂອງ ແມ່ທັງແປດ ສະນັ້ນ ຄຳນີ້ ຕ້ອງ ແມ່ນ ຕົວງໍ ( ງ ) ສະກົດ
- ໆລໆ

ແຕ່ ຢ່າ ລືມ ວ່າ ຕົວສະກົດ ພິເສດ ເປັນ ທັງ ຕົວສະກົດ ແລະ ເປັນ ທັງ ພຍາງຫນ້າ ຂອງ ພຍາງຫລັງ ທີ່ ຢູ່ ຖັດ ມັນ ໄປ ( ກາຍ ມັນ ໄປ ແລ້ວ ) ແລະ ທີ່ ອ່ານ ອອກ ສຽງ ອະ ປາສຈາກ ສຣະອະ ( ◌ະ ) ປະກອບ ຊຶ່ງ ຫມາຍຄວາມວ່າ ຕົວສະກົດ ພິເສດ ບໍ່ ມີ ສິດ ເປັນ ຕົວສະກົດ ທີ່ ປະກອບ ສຣະອະ ໄດ້

- ສິລະປະ => ເຮົາ ຕ້ອງ ອ່ານ ວ່າ ສິ-ລະ-ປະ ( ບໍ່ ມີ ສິດ ທີ່ ຈະ ອ່ານ ເປັນ ສິນ-ລະ-ປະ ໄດ້ ຢ່າງ ເດັດຂາດ )
- ສິລປະ => ໃຫ້ ອ່ານ ວ່າ ສິນ-ລະ-ປະ
- ວາສນາ => ວາດ-ສະ-ຫນາ ( ແລະ ບໍ່ ມີ ສິດ ທີ່ ຈະ ຊຽນ ວາສະນາ ຫລື ວາສະຫນາ )
- ເອກຣາດ => ເອກ-ກະ-ຣາດ

ພຍາງ ທ້າຍຄໍາ ຂອງ ທຸກໆ ຄໍາ ຈະ ຂຽນ ດ້ວຍ ຕົວສະກົດ ທັງແປດ ຢ່າງດຽວ ກັບ ພຍາງ ນັ້ນ ບໍ່ ປະກອບ ດ້ວຍ ສຣະ ແລະ ເຮົາ ບໍ່ ມີ ສິດ ທີ່ ຈະ ຕື່ມ ພຍັນຊນະ ຕົວອື່ນ ຂັດທ້າຍ ຕົວສະກົດ ທ້າຍຄໍາ ເດັດຂາດ ອັນນີ້ ຄື ກົດເກນ ການຂຽນ ພາສາ ລາວ ກັບ ເຮົາ ຖື ຫລັກ ແນວນີ້ ເຮົາ ກໍ ສາມາດ ໃຫ້ ເດັກນ້ອຍ ຂຽນຫວາຍ ໄດ້ ບໍ່ດັ່ງນັ້ນ ການຂຽນ ຂອງເຮົາ ຈະ ບໍ່ ມີ ຫລັກ ອັນໃດ ທັງສິ້ນ ຄື ເປັນ ການຂຽນ ຕາມໃຈ ນັ້ນເອງ

## ນີ- ກົດເກນ ການຂຽນ ຕາມ ເຄົ້າ ດ້ວຍ ພຍັນຊນະຈູງ

ອີງ ຕາມ ຫລັກ ໄວຍາກອນ ຫລັກ ນີ້ ຄໍາ ທີ່ ຂຽນ ດ້ວຍ ພຍັນຊນະຈູງ ແລະ ທີ່ ມີ ເຄົ້າ ບາລີ ແລະ ເຄົ້າ ສັນສະກຣິດ ຊຶ່ງ ພຍາງຫນ້າ ຈະ ອ່ານ ອອກ ສຽງອະ ແຕ່ ບໍ່ ມີ ສຣະອະ ( ◌ະ ) ປະກອບ

ຄໍາ ທີ່ ຂຽນ ດ້ວຍ ພຍັນຊນະຈູງ ແລະ ທີ່ ມີ ເຄົ້າ ບາລີ ແລະ ເຄົ້າ ສັນສະກຣິດ ຕ້ອງ ຂຽນ ແບບ ນີ້

- ຂນະ ຂແນງ ຂຍາຍ ຂຍັນ ຂຍັບ ຂນາດ ຂນານ ຂນົບ
- ຄນະ
- ສນິດ(ສນົມ) ສເນີ ສນາມ ສເວີຍ
- ຊນະ ຊນິດ(ປະເພດ)
- ຖນອມ ຖວາຍ
- ຜແນກ ຜລິດ
- ໆລໆ
- ຕລາດ ເປັນ ຄໍາລາວ ແຕ່ ກໍ ຂຽນ ດ້ວຍ ພຍັນຊນະ ຈູງ ເຫມືອນກັນ
    - ກາດ ນ. ແປວ່າ ຕລາດ ແບບ ຕລາດເຊົ້າ ນີ້ ລະ ຄື ຂາຍ ສັນມະປີ
    - ລາດ ນ. ຫມາຍເຖິງ ຕລາດນັດ ຄື ລາດຄວາຍ ກໍ ມີ ແຕ່ ຄວາຍ ໃນ ມື້ນັ້ນ




ຄໍາ ທີ່ ຂຽນ ຕາມ ເຄົ້າ ດ້ວຍ ພຍັນຊນະ ຄວບ ມີ ຄື ສວາກຂາໂຕ ທວິວັຈນະ ເປັນຕົ້ນ ສ່ວນ ຕົວ ອື່ນໆ ນັ້ນ ຂ້າພະເຈົ້າ ບໍ່ ໄດ້ຊອກ ຫາຮູ້ ຫາເຫັນ ແຕ່ຢ່າງໃດ

ຮູປຕາ ໖

ກັບ ທ່ານ ຢາກ ຂຽນ ຄໍາໃດ ທີ່ ມີ ເຄົ້າ ຈາກ ພາສາ ບາລີ ໃຫ້ ທ່ານ ຄິດ ໃສ່ ຄໍາອະທິບາຍ ຂ້າງເທິງນີ້ ນອກຈາກນີ້ ກໍ ຍັງ ມີ ກໍຣະນີ ສອງ ຢ່າງ ອີກ ຄື ຄໍາເຄົ້າ ທີ່ ບໍ່ ຖືກ ຕັດ ຕົວສະກົດ ອອກ ນຶ່ງ ແລະ ທີ່ ແຜງ ຕົວສະກົດ ເຂົ້າ ຕື່ມ ນຶ່ງ ເຊັ່ນ

1. ທັມມະດາ ທັມມະຊາດ ກັມມະກອນ ( ຕົວສະກົດ ຕົວມໍ ບໍ່ ຖືກ ຕັດ ອອກ )
2. ສັມນາ[ສໍາ-ມະ-ນາ] ຈາກ ເຄົ້າ ສະມະນະ ໂດຍ ແຜງ ສຣະອະ ເປັນ ໄມ້ກັນ ແລະ ຕົວມໍ ເປັນ ຕົວສະກົດ ພິເສດ
3. ຄົມນາ ຈາກ ເຄົ້າ ບາລີ ຄະມະນະ ທີ່ ແຜງ ເປັນ ຄົມນາ[ຄົມ-ມະ-ນາ] (ແຜງ ພຍັນຊນະຫລັງ ເປັນ ຕົວສະກົດ)

4. ປົກຕິ ຈາກ ເຄົ້າ ບາລີ ປະກະຕິ ແລະ ແຜງ ເປັນ ຄຳລາວ ປົກຕິ[ປົກ-ກະ-ຕິ]
5. ເອກຣາດ ຈາກ ເຄົ້າ ເອກະ+ຣາຊະ = ເອກ+ຣາຊ ແລະ ແຜງ ເປັນ ຄຳລາວ ເອກຣາດ[ເອກ-ກະ-ຣາດ]
6. ໆລໆ

ຄຳເຄົ້າ ຂອງ ຄຳ ສົມບາ ຄົມບາ ປົກຕິ ເອກຣາດ ບໍ່ ມີ ຕົວສະກົດ ແຕ່ຢ່າງໃດ ທັງສິ້ນ ມັນ ເປັນ ພຽງ ຄຳແຜງ ຢ່າງດຽວ ເທົ່ານັ້ນ ແລະ ກໍ ແຕກຕ່າງ ກັບ ຄຳ ທັມມະດາ ທີ່ ມີ ຕົວສະກົດ ອັນແທ້ຈິງ

ສະນັ້ນ ຄັນ ຄຳເຄົ້າ ຄຳໃດ ມີ ຕົວສະກົດ ແທ້ ສຳລັບ ການຂຽນ ຄຳ ທີ່ ປະກອບ ດ້ວຍ ໄມ້ອັນ ( ັນ ) ເພິ່ນ ຈະ ບໍ່ ຕັດ ຕົວສະກົດ ຂອງ ຄຳນັ້ນ ອອກ ທັງນີ້ ກໍ ເພື່ອ ຫມາຍ ຄວາມແຕກຕ່າງ ຣະຫວ່າງ ຄຳເຄົ້າ ທີ່ ມີ ຕົວສະກົດ ອັນ ແທ້ຈິງ ແລະ ຄຳແຜງ ຊຶ່ງ ຄຳເຄົ້າ ຂອງມັນ ບໍ່ ມີ ຕົວສະກົດ ໃດໆ ຍ້ອນວ່າ ຄຳ ທັງສອງ ຢ່າງນີ້ ເພິ່ນ ອ່ານ ແບບດຽວກັນ ໃນ ພາສາ ລາວ

ເຮົາ ບໍ່ ຈຳເປັນ ທີ່ ຈະ ຕ້ອງ ມີ ວັຈນານຸກົມ ສຳລັບ ການຂຽນ ຄຳ ທີ່ ສະກົດ ດ້ວຍ ຕົວສະກົດ ພິເສດ ກໍ ໄດ້ ເພາະ ເຮົາ ສາມາດ ໃຊ້ ຫລັກເກນ ທີ່ ຂ້າພະເຈົ້າ ໄດ້ກ່າວ ມາ ຂ້າງເທິງນີ້ ກໍ ພຽງພໍ ກັບ ຄວາມຕ້ອງການ ໄດ້ ເຫມືອນກັນ ແລະ ກໍ ແນ່ນອນ ວ່າ ຄັນ ເຮົາ ມີ ວັຈນານຸກົມ ກໍ ຍິ່ງ ເປັນ ຈຸດດີ ແຕ່ ໃນ ປັດຈຸບັນນີ້ ເຮົາ ບໍ່ ມີ ແລະ ເຮົາ ຕ້ອງ ໃຊ້ ວິທີ ນີ້ ໄປ ກ່ອນ ຊາມຊາ ລໍຖ້າ ກຳເນີດ ຂອງ ສິ່ງ ທີ່ ມັນ ຍັງ ບໍ່ ທັນ ມາ ຮອດ

## ສລຸບຄວາມ || Conclusion

ເຮົາ ຈະ ເອົາ ຄຳໃດ ທີ່ ປະກອບ ດ້ວຍ ພຍັນຊນະ ຄວບ ຢູ່ ແລ້ວ ດັ່ງ ຄຳ “ພລັນ” ທີ່ ປະກອບ ດ້ວຍ ພຍັນຊນະ ຄວບ ພລ ໄປ ຂຽນ ເປັນ ພຍັນຊນະ ຈູງ ພລັງ[ພະ-ລັງ] ທີ່ ປະກອບ ດ້ວຍ ພຍັນຊນະ ພລ ຕົວດຽວ ກັນ ບໍ່ ໄດ້ ເດັດຂາດ ສະນັ້ນ ເຮົາ ຈຳເປັນ ຈະ ຕ້ອງ ຕື່ມ ສຣະອະ ( ະ ) ໃສ່ ພຍາງຫນ້າ ສເມີ ເຖິງແມ່ນວ່າ ການອ່ານ ຈະ ມີ ສຽງ ໄວ ຜິດ ປົກຕິ ກໍ ຕາມ ທັງນີ້ ກໍ ເພື່ອ ຫມາຍ ຄວາມແຕກຕ່າງ ແລະ ຫມາຍ ຣະບຽບ ອັນ ແນ່ນອນ ສຳລັບ ກົດເກນ ການຂຽນ ຄຳລາວ ຣະຫວ່າງ ພຍັນຊນະ ຈູງ ແລະ ພຍັນຊນະ ຄວບ ນັ້ນເອງ

ເຖິງຢ່າງໃດກໍດີ ການພິກໄຫວ ທີ່ ຂ້າພະເຈົ້າ ໄດ້ກ່າວ ຂ້າງເທິງນີ້ ຫມາຍເຖິງ ຄວາມສາມາດ ຂອງ ທ່ານ ໃນ ການສັງເກດ ເພື່ອ ຈະ ຂຽນ ຄຳລາວ ຕ່າງໆ ໃຫ້ ຖືກຕ້ອງ ປາສຈາກ ວັຈນານຸກົມ ເປັນ ຕົວເພິ່ງ ນັ້ນເອງ

------ oOo ------

## ຄຳອຸທິດ

ຂໍ ອຸທິດ ຜົນງານ ອັນ ເລັກໆ ນ້ອຍໆ ອັນນີ້ ແດ່ ຄົນລາວ ທີ່ ຮັກຫອມ ຄວາມເປັນລາວ ທຸກຄົນ
ແດ່ ພຣະເຖຣານຸເຖຣະ ທຸກໆ ອົງ
ແດ່ ພໍ່ ແລະ ຄຸນງາມຄວາມດີ ຂອງ ແມ່
ແດ່ ນັກຮຽນ ແລະ ນັກສຶກສາ ພາສາ ລາວ ທຸກຄົນ
ແດ່ ອ້າຍ ເອື້ອຍ ນ້ອງ ໃພ້ ເຂີຍ ພ້ອມທັງ ຫລານ ທຸກຄົນ
ແດ່ ຍາດຕິພີ່ນ້ອງ ແລະ ຫມູ່ເພື່ອນ ຂອງ ຂ້າພະເຈົ້າ ທຸກຄົນ
ແດ່ ບຸນຄຸນ ຂອງ ພໍ່ຕູ້ແມ່ຕູ້ ປູ່ຍ່າຕາຍາຍ ພ້ອມດ້ວຍ ທວດ ທຸກຄົນ
ແລະ ພິເສດສຸດ ແດ່ ເດັກນ້ອຍ ລາວ ທີ່ ກຳລັງ ຮຽນ ພາສາ ລາວ ໃນ ປັດຈຸບັນນີ້

## ວິທີ ຂຽນ

ທ້າຍສຸດນີ້ ຂ້າພະເຈົ້າ ຂໍ ອຸທິດ ກຸສົນ ຜົນບຸນ ທຸກຢ່າງ ທີ່ ໄດ້ມາ ແດ່ ລູກ ທຸກໆ ຄົນ

------ oOo ------

ເມື່ອ ວັນຈັນ ທີ ໑໗ ເດືອນ ທັນວາ/décembre ຄສ. ໒໐໑໒

ບົນ ເວັບໄຊ http://laophaen.free.fr/Dico/spip.php?article59

ໂດຍ ກັດຕຸ ຄຳແພວ ພູເພັຊຣລິນທອງ
Khamphéo Phouphetlinthong

ບົດນີ້ ມີ ຮູບ ປະກອບ

ຈົ່ງ ໃຫ້ ຄົນລາວ ມີ ຄວາມສາມັກຄີ

ຈົ່ງ ໃຫ້ ຄົນລາວ ກາຍເປັນ ຄົນ ສລາດ

ຈົ່ງ ໃຫ້ ຄົນລາວ ກາຍເປັນ ຄົນ ເຂັ້ມແຂງ

ຈົ່ງ ໃຫ້ ຄົນລາວ ກາຍເປັນ ຄົນ ນັກ ສຶກສາ

ຈົ່ງ ໃຫ້ ຄົນລາວ ກາຍເປັນ ຄົນ ຫົວຊາດ ນິຍົມ

ຈົ່ງ ໃຫ້ ຄົນລາວ ກາຍເປັນ ນາຍ ຂອງ ຄົນລາວ ທັງຊາດ

ປາສຈາກ ຊາດ ອື່ນ ປົກຄອງ ພ້ອມທັງ ວັທນາຖາວອນ ດ້ວຍ ເທີ້ນ